

# ສຳເລັດກອງປະຊຸມຄົບຄະນະຂອງ ຄຄຊ ຄັ້ງທີ I ປະຈຳປີ 2022





ກອງປະຊຸມຄົບຄະນະຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ຄັ້ງທີ I ປະຈຳປີ 2022 ໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 30 ມີນາ 2022 ທີ່ຫ້ອງປະຊຸມສຳນັກງານ ຄຄຊ, ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເປັນປະທານຂອງທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ, ປະທານ ຄຄຊ ແລະ ການເຂົ້າຮ່ວມຂອງຮອງປະທານ, ຄະນະກຳມະການ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມທັງແບບເຊິ່ງໜ້າ ແລະ ອອນລາຍ.






ກອງປະຊຸມໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມຄົບຄະນະ ຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ III ປີ 2021 ໂດຍ ທ່ານ ນາງ ຟອງຈິນດາ ແສງສຸລິວົງ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ແລະ ຄະນະ ຄຄຊ ກໍໄດ້ປະກອບຄຳເຫັນຕໍ່ການລາຍງານດັ່ງກ່າວຢ່າງມີວິໄສທັດ. ທີ່ປະຊຸມຍັງໄດ້ຮັບຟັງການລາຍງານການເຄື່ອນໄຫວວຽກງານຂອງ ສຄຄຊ ປະຈຳປີ 2021 ແລະ ທິດທາງແຜນການ ໃນປີ 2022, ລາຍງານສະພາບພື້ນເດັ່ນຂອງ ຕລຊລ ໃນປີ 2021 ແລະ ທິດທາງແຜນການປີ 2022, ລາຍງານຄວາມຄືບໜ້າການປັບປຸງລະບົບໄອທີໃໝ່ຂອງ ຕລຊລ (Next Generation Trading System: NGTS).

ທ່ານປະທານ ຄຄຊ ໄດ້ຕີລາຄາສູງຕໍ່ຜົນໄດ້ຮັບຂອງກອງປະຊຸມໃນຄັ້ງນີ້ ຊຶ່ງຜົນສຳເລັດຂອງກອງປະຊຸມແມ່ນເກີດຂຶ້ນຍ້ອນຄວາມຮັບຜິດຊອບສູງຂອງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໄດ້ພ້ອມໃຈກັນຄົ້ນຄວ້າພິຈາລະນາ, ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ ແລະ ມີລັກສະນະສ້າງສັນ ທ່ານຍັງໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ບັນດາ

ຄະນະກຳມະການຄຸ້ມຄອງຫຼັກຊັບທັງໝົດ ທີ່ໄດ້ປະກອບສ່ວນເຮັດໃຫ້ກອງປະຊຸມໃນຄັ້ງນີ້ ດຳເນີນໄປດ້ວຍຜົນສຳເລັດຢ່າງຈົບງາມຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ໄດ້ກຳນົດໄວ້ ແລະ ເພື່ອສືບຕໍ່ຈັດຕັ້ງປະຕິບັດວຽກງານຄຸ້ມຄອງຫຼັກຊັບໃຫ້ໜັກແໜ້ນເຂັ້ມແຂງກວ່າເກົ່າ.



#ຂ່າວ ແລະ ພາບໂດຍ: ນາງ ປາໃນ ພົມທະລາ

## ໃຊ້ເງິນກີບທົ່ວທັງຊາດ ສ້າງປົດບາດຄ່າເງິນກີບລາວ